# ການຄຸ້ມຄອງຊັບພະຍາກອນທຳມະຊາດ ເພື່ອຊີວິດທີ່ດີຂື້ນໃນ ບັນດາບ້ານຂອງແຂວງຫົວພັນ

## ສະຫຼຸບຫຍໍ້ 6 ບົດກ່ຽວກັບການຄຸ້ມຄອງປ່າໄມ້ປ່ອງ ແລະ ການພັດທະນາຕ່ອງໂສ້ມູນຄ່າ



ພຶດສະພາ 2020

# ສະຫຼຸບໂດຍຫຍໍ້ 1:
# ຕ່ອງໂສ້ມູນຄ່າຫັດຖະກຳຈັກສານ - ພຶດສະພາ 2020

## ສະພາບຄວາມເປັນມາຂອງຕ່ອງໂສ້ມູນຄ່າຫັດຖະກຳຈັກສານ




ອົງການເກຣດ (GRET) ໄດ້ສະໜັບສະໜູນແຜນຍຸດທະສາດການພັດທະນາໄມ້ປ່ອງຂອງແຂວງຫົວພັນ ໄລຍະ I ປີ 2011-2015 ແລະ ໄລຍະ II ປີ 2016-2020 ໂດຍຜ່ານ ການນຳໃຊ້ວິທີການແບບມີສ່ວນຮ່ວມຈາກຫຼາຍພາກສ່ວນທີ່ກ່ຽວຂ້ອງ ເຂົ້າໃນການອຳນວຍຄວາມສະດວກການເຊື່ອມໂຍງກັນລະຫວ່າງຊາວບ້ານ, ພໍ່ຄ້າ ແລະ ພາກສ່ວນລັດ, ສະນັ້ນ 1 ໃນ 5 ຕ່ອງໂສ້ມູນຄ່າໄມ້ປ່ອງທີ່ມີການພັດທະນາພາຍໃນແຂວງ ແມ່ນວຽກງານຫັດຖະກຳຈັກສານ ແລະ ໄດ້ຮັບການສະໜັບສະໜູນໂດຍໂຄງການໄມ້ປ່ອງ ແລະ ຫວາຍ ຕັ້ງແຕ່ປີ 2013 ລວມທັງໝົດມີ 30 ບ້ານເຂົ້າຮ່ວມ ເຊິ່ງບ້ານເຫຼົ່ານີ້ ລ້ວນແຕ່ເປັນບ້ານທີ່ມີພື້ນຖານໃນການຈັກສານ, ມີຄ້າຂາຍຫັດຖະກຳໄມ້ປ່ອງມາກ່ອນ ແລະ ສ່ວນຫຼາຍແມ່ນບ້ານທຸກຍາກ ແລະ ຫ່າງໄກ ທີ່ນອນຢູ່ໃນ 3 ເມືອງຄື: ຊຳເໜືອ, ວຽງໄຊ ແລະ ສົບເບົາ ເຊິ່ງລາຍຮັບຫຼັກຂອງພວກເຂົາເຈົ້າແມ່ນມາຈາກການປູກພືດກະສິກຳ ແລະ ການລ້ຽງສັດ ສ່ວນຜະລິດຕະພັນຫັດຖະກຳເປັນແຫຼ່ງລາຍຮັບເສີມສຳລັບຊາວບ້ານ ເພື່ອໃຊ້ຊ່ອຍໃນຊີວິດປະຈຳວັນ ເຊັ່ນ: ຊື້ອາຫານການກິນ, ຈ່າຍຄ່າໄຟຟ້າ, ຄ່າລູກຫຼານເຂົ້າຮຽນ, ໃຊ້ຈ່າຍໃນກໍລະນີສຸກເສີນ ແລະ ອື່ນໆ.

## ສະພາບຕ່ອງໂສ້ມູນຄ່າຫັດຖະກຳຈັກສານ

ປັດຈຸບັນ ມີທັງໝົດ 30 ບ້ານ ຄື: 6 ບ້ານ ຈາກເມືອງຊຳເໜືອ, 20 ບ້ານ ຈາກເມືອງວຽງໄຊ ແລະ 4 ບ້ານ ຈາກເມືອງສົບເບົາ ທີ່ເຂົ້າຮ່ວມຕ່ອງໂສ້ມູນຄ່າຫັດຖະກຳ. ໂດຍທົ່ວໄປສະເລ່ຍລາຍຮັບລວມຈາກການຂາຍຫັດຖະກຳແມ່ນເພີ່ມຂຶ້ນໃນແຕ່ລະປີຈາກຜະລິດຕະພັນຫັດຖະກຳທີ່ຫຼາຍກວ່າ 30 ຊະນິດ ແລະ ບັນດາຜະລິດຕະພັນເຫຼົ່ານັ້ນ ສ່ວນຫຼາຍແມ່ນຫັດຖະກຳແບບດັ້ງເດີມຂອງຄົນລາວ.



ກະເຕິບ



ຫີບ



ກ່ອງບັນຈຸທໍ່ດູດ



ກະຕ່າ



ແອບເຂົ້າ



ທໍ່ດູດ

ເຖິງແນວໃດກໍ່ຕາມ ບາງຜະລິດຕະພັນທີ່ນິຍົມຫຼາຍໃນທ້ອງຕະຫຼາດກໍໄດ້ຮັບ ການພັດທະນາຕົບແຕ່ງຂຶ້ນເທື່ອລະກ້າວ ເພື່ອຕອບສະໜອງຄວາມຕ້ອງການຂອງທ້ອງຕະຫຼາດ ຄື ແອບເຂົ້າ, ກະເຕິບ, ຫີບ, ກະຕ່າ , ທໍ່ດູດ, ກ່ອງບັນຈຸທໍ່ດູດ ແລະ ອື່ນໆ, ປັດຈຸບັນ ຫັດຖະກຳໄມ້ປ່ອງແຂວງຫົວພັນ ເປັນທີ່ຮູ້ຈັກກັນດີຂອງແຂກຄົນ ທັງພາຍໃນ ແລະ ຕ່າງປະເທດ ໂດຍ ພໍ່ຄ້າທ້ອງຖິ່ນຫຼາຍທ່ານ ໄດ້ຮັບຊື້ຜະລິດຕະພັນຫັດຖະກຳຈາກຊາວບ້ານ ເພື່ອຈຳໜ່າຍໃຫ້ຕະຫຼາດພາຍໃນ ແລະ ຕ່າງແຂວງ ເຊັ່ນ: ຊຽງຂວາງ, ຫຼວງພະບາງ ແລະ ນະຄອນຫຼວງວຽງຈັນ ນອກຈາກນັ້ນ ພໍ່ຄ້າຕ່າງແຂວງບາງທ່ານຍັງສັ່ງຊື້ໂດຍກົງຈາກຊາວບ້ານ ເຊັ່ນວ່າ: ພໍ່ຄ້າຈາກແຂວງຫຼວງພະບາງ, ພໍ່ຄ້ານະຄອນຫຼວງວຽງຈັນ ແລະ ຮ້ານຄ້າເຄື່ອງຫັດຖະກຳຕ່າງໆ.

## ທັກສະ ແລະ ປະສົບການຂອງຜູ້ຜະລິດຫັດຖະກຳຈັກສານ



ຜູ້ຜະລິດ/ຊາວບ້ານ ໄດ້ນຳໃຊ້ໄມ້ປ່ອງທີ່ມີຢູ່ເພື່ອສ້າງລາຍຮັບເສີມ ໃຫ້ແກ່ການດຳລົງຊີວິດ ຂອງພວກເຂົາ ໄມ້ປ່ອງມີປະໂຫຍດຫຼາຍຈາກການສ້າງລາຍຮັບດັ່ງກ່າວ ຄື ຜູ້ຜະລິດບໍ່ໄດ້ລົງທຶນຊື້ວັດຖຸດິບ ໃນຄະນະດຽວກັນຍັງເປັນການສະໜອງການຈ້າງແຮງງານ ແລະ ສ້າງລາຍຮັບໃຫ້ກັບຜູ້ສູງອາຍຸ ແລະ ຜູ້ທີ່ມີທັກສະຈຳກັດໃນການເຮັດອາຊີບອື່ນ ເຊິ່ງການຜະລິດຍັງສ້າງສາຍສຳພັນທີ່ດີລະຫວ່າງຜູ້ຜະລິດກັບພໍ່ຄ້າ ແລະ ພາຍໃນກຸ່ມດ້ວຍກັນ ແລະ ເປັນໂອກາດໃນການແລກປ່ຽນບົດຮຽນເພື່ອປັບປຸງຄຸນນະພາບຂອງຜະລິດຕະພັນຫັດຖະກຳ ພ້ອມເພີ່ມປະລິມານການຜະລິດໄດ້ຫຼາຍ ເພື່ອຜົນປະໂຫຍດເຊິ່ງກັນ ແລະ ກັນ. ແຕ່ຍັງມີບາງບ້ານທີ່ປະສົບກັບບັນຫາຫຍຸ້ງຍາກ ເຊັ່ນ: ວັດຖຸດິບ/ໄມ້ບໍ່ພຽງພໍແກ່ການຜະລິດ, ກຸ່ມບໍ່ເຄື່ອນໄຫວ, ຫົວໜ້າກຸ່ມບໍ່ມີການປະສານກັບສະມາຊິກ, ສະມາຊິກກຸ່ມບາງຄົນບໍ່ປະຕິບັດຕາມລະບຽບຂອງກຸ່ມ, ບາງຄົນບໍ່ໃສ່ໃຈສອນຜູ້ຜະລິດທີ່ຍັງຂາດທັກສະໃນການຜະລິດ ແລະ ຜະລິດບໍ່ໄດ້ຄຸນະພາບ. ນອກຈາກນີ້ ເສັ້ນທາງເຂົ້າເຖິງບ້ານບໍ່ສະດວກ ເຮັດໃຫ້ມີພໍ່ຄ້າເຂົ້າເຖິງໜ້ອຍ ຫຼື ບາງບ້ານບໍ່ມີພໍ່ຄ້າເຂົ້າເຖິງເລີຍ ເຊິ່ງພວກເຂົາເຈົ້າຕ້ອງໄດ້ສົ່ງຜະລິດຕະພັນໃຫ້ກັບພໍ່ຄ້າດ້ວຍຕົນເອງ ຫຼື ເລາະຂາຍຢູ່ຕາມຕະຫຼາດທ້ອງຖິ່ນ ໃນບັນຫາເຫຼົ່ານີ້ ເປັນສາເຫດເຮັດໃຫ້ລາຄາຜະລິດຕະພັນບໍ່ຄົງທີ່ ແລະ ມີການຜະລິດຫຼຸດລົງ.

## ທ່າແຮງໃນອະນາຄົດ ສຳລັບວຽກງານຕ່ອງໂສ້ມູນຄ່າຫັດຖະກຳຈັກສານ



ນອກຈາກບັນດາບ້ານພາຍໃນ 3 ເມືອງແລ້ວ ຍັງມີຫຼາຍບ້ານທີ່ມີທ່າແຮງການຜະລິດ ແຕ່ການສະໜັບສະໜູນຍັງບໍ່ທັນທົ່ວເຖິງ ໂດຍສະເພາະບັນດາເມືອງອື່ນ ເຊິ່ງຍັງບໍ່ທັນເປັນທີ່ຮູ້ຈັກຂອງພໍ່ຄ້າ ແລະ ແຂກຄົນອື່ນໆ ພວກເຂົາເຈົ້າຍັງຂາຍພາຍໃນບ້ານຂອງຕົນ ແລະ ບ້ານໃກ້ຄຽງເທົ່ານັ້ນ ຈຶ່ງເຮັດໃຫ້ລາຍຮັບຈາກຫັດຖະກຳຍັງຈຳກັດ ເຊັ່ນດຽວກັນ ບັນດາບ້ານທີ່ໄດ້ສະໜັບສະໜູນແລ້ວນັ້ນ ໄດ້ມີການເຕີບໂຕ, ໄດ້ປັບປຸງການຜະລິດ ແລະ ການຄ້າຂາຍ ເຊິ່ງໄດ້ເປັນທີ່ຮູ້ຈັກກັນດີຂອງຫຼາຍທ້ອງຖິ່ນແລ້ວ ພ້ອມຈະເປັນຕົວແບບໃຫ້ກັບຜູ້ຜະລິດອື່ນໆທັງພາຍໃນ ແລະ ຕ່າງແຂວງໄດ້ມາຮຽນຮູ້ໃນຕໍ່ໜ້າ.

## ຂໍ້ສະເໜີແນະ ໃນການພັດທະນາຕ່ອງໂສ້ມູນຄ່າຫັດຖະກຳຈັກສານ

ຈາກການເຂົ້າຮ່ວມຂອງ 30 ບ້ານ ເຫັນໄດ້ວ່າຕ່ອງໂສ້ມູນຄ່າຫັດຖະກຳເປັນແຫຼ່ງລາຍຮັບທີ່ດີໃຫ້ແກ່ຜູ້ຜະລິດ/ຊາວບ້ານ ແຕ່ຫຼາຍກຸ່ມຜູ້ຜະລິດຍັງບໍ່ສາມາດບໍລິຫານກຸ່ມໃຫ້ເຂັ້ມແຂງ ເພື່ອໃຫ້ບັນລຸຜົນປະໂຫຍດໃນການຄ້າຂາຍ ສະນັ້ນ ອົງການຈັດຕັ້ງສາກົນທີ່ບໍ່ຂຶ້ນກັບລັດ, ພາກສ່ວນລັດ ແລະ ພາກເອກະຊົນໃນພາກພື້ນ ຄວນຄຳນຶງເຖິງທ່າແຮງ ແລະ ຄວາມສຳຄັນຂອງຕ່ອງໂສ້ມູນຄ່ານີ້ ເພື່ອສືບຕໍ່ສົ່ງເສີມ-ປັບປຸງການຜະລິດໃຫ້ມີຄຸນະພາບດີຂຶ້ນ ແລະ ການເຂົ້າເຖິງຕະຫຼາດຫຼາຍຂຶ້ນ ນີ້ກໍເພື່ອຜົນປະໂຫຍດທີ່ດີໃຫ້ກັບທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມດຽວກັນ ຈະຕ້ອງສະໜັບສະໜູນໃຫ້ພາກສ່ວນທີ່ກ່ຽວຂ້ອງ ເຂົ້າໃຈເຖິງການປົກປັກຮັກສາຊັບພະຍາກອນປ່າໄມ້ປ່ອງຂອງພວກເຂົາເຈົ້າ ເພື່ອການນຳໃຊ້ແບບຍາວນານ.

# ສະຫຼຸບໂດຍຫຍໍ້ 2:
# ຕ່ອງໂສ້ມູນຄ່າໄມ້ກອັນ - ພຶດສະພາ 2020

## ປະຫວັດຄວາມເປັນມາຂອງຕ່ອງໂສ້ໄມ້ກອັນໃນແຂວງຫົວພັນ





ອົງການເກຣດ (GRET) ໂດຍການມີສ່ວນຮ່ວມຢ່າງໃກ້ສິດຂອງຄະນະຊີ້ນຳໄມ້ປ່ອງແຂວງຫົວພັນ ໄດ້ສະໜັບສະໜູນແຜນຍຸດທະສາດພັດທະນາໄມ້ປ່ອງຂອງແຂວງ ສະນັ້ນ ຕ່ອງໂສ້ມູນຄ່າໄມ້ກອັນ (ໄມ້ຄົ້ວ ແລະ ໄມ້ນານ) ໄດ້ພັດທະນາມາແຕ່ປີ 2011 ແລະ ມີພຽງບໍລິສັດເລມິນເຈົາເທົ່ານັ້ນ, ເນື່ອງຈາກທ່າແຮງດ້ານເສດຖະກິດເພີ່ມຂຶ້ນ ໃນປີ 2012 ຈຶ່ງມີສອງບໍລິສັດເກັບຊື້ເພີ່ມຂຶ້ນ. ຕັ້ງແຕ່ປີ 2013, ພາກສ່ວນລັດຂັ້ນແຂວງ ແລະ ຂັ້ນເມືອງໄດ້ຮັບຮູ້ເຖິງຜົນປະໂຫຍດດ້ານເສດຖະກິດຕໍ່ຊາວບ້ານ ແລະ ແຂວງ ຈຶ່ງເລີ່ມປະຕິບັດດ້ານນະໂຍບາຍທີ່ຫຼາກຫຼາຍ ແລະ ລະບຽບການຕ່າງໆ ເພື່ອອຳນວຍຄວາມສະດວກການຕອບສະໜອງໃນການຊຸກຍູ້ ໃຫ້ນັກລົງທຶນເຂົ້າຮ່ວມຊື້-ຂາຍຫຼາຍຂຶ້ນ ພ້ອມເຮັດໃຫ້ຈຳນວນບໍລິສັດເກັບຊື້ເພີ່ມຂຶ້ນ ແລະ ເຮັດໃຫ້ຈຳນວນບ້ານເປົ້າໝາຍເຂົ້າຮ່ວມເພີ່ມຂຶ້ນເປັນ 30 ບ້ານ ໃນການສ້າງລາຍຮັບເພີ່ມຢ່າງຫ້າວຫັນຢູ່ໃນ 2 ເມືອງຄື: ເມືອງວຽງໄຊ ແລະ ເມືອງສົບເບົາ.





ການຊື້-ຂາຍໄມ້ກອັນ (ໄມ້ນານ) ລະຫວ່າງບ້ານ ແລະ ບໍລິສັດ ສ່ວນຫຼາຍແມ່ນຢູ່ໃນຕອນປ່າ ຫຼື ແຄມທາງ ໂດຍບໍລິສັດສ້າງທາງເຂົ້າໄປໃນເຂດປ່າໄມ້ກອັນ ເພື່ອເຮັດໃຫ້ການຜະລິດ ຂອງຊາວບ້ານສະດວກຂຶ້ນ ເຊິ່ງຜະລິດຕະພັນໄມ້ນານບາງສ່ວນກໍຖືກສົ່ງອອກໄປຫວຽດນາມ ໂດຍກົງ ແລະ ບາງສ່ວນກໍຖືກແປຮູບເປັນໄມ້ຄົ້ວແລ້ວ ຈຶ່ງສົ່ງອອກ ໃນການສ້າງລາຍຮັບຜ່ານການຜະລິດ ແລະ ຊື້-ຂາຍນີ້ ສາມາດຊ່ວຍຫຼຸດຜ່ອນຄວາມທຸກຍາກໃຫ້ຊາວບ້ານ ທີ່ໃຊ້ເຂົ້າໃນການໃຊ້ຈ່າຍໃນຄົວເຮືອນຂອງເຂົາເຈົ້າ ເຊັ່ນວ່າ: ການສຶກສາຂອງເດັກນ້ອຍ, ການໃຊ້ຈ່າຍພາຍໃນຄົວເຮືອນ, ເຄື່ອງນຸ່ງຫົ່ມ ແລະ ອື່ນໆ. ນອກຈາກນັ້ນ ການມີສັນຍາກັບບັນດາບໍລິສັດ ຊາວບ້ານໄດ້ຮັບຜົນປະໂຫຍດເພີ່ມເຕີມເຊັ່ນ: ຄ່າທຳນຽມໃຫ້ບ້ານ, ການກໍ່ສ້າງພື້ນຖານໂຄງລ່າງຂອງບ້ານ (ຫ້ອງການບ້ານ, ສ້າງຂົວ, ການສ້ອມແປງເສັ້ນທາງ ແລະ ອື່ນໆ). ເງິນທີ່ໄດ້ຈາກການເກັບຄ່າທານຽມ ໂດຍປົກກະຕິແມ່ນໃຊ້ເປັນກອງທຶນບ້ານ ແລະ ຄ່າກວດກາຕິດຕາມ-ຄຸ້ມຄອງປ່າໄມ້ປ່ອງປະຈຳປີ ເພື່ອຮັບປະກັນການນຳໃຊ້ຊັບພະຍາກອນໄມ້ປ່ອງແບບຍືນຍົງ ສຳລັບ ຂັ້ນແຂວງກໍ່ໄດ້ຮັບຜົນຕອບແທນທາງດ້ານເສດຖະກິດ ໂດຍຜ່ານພາສີທີ່ເກັບຈາກບໍລິສັດໂດຍອີງໃສ່ໂຄຕ້າໃນແຕ່ລະປີຂອງບໍລິສັດ ພ້ອມທັງຄ່າທຳນຽມສົ່ງອອກຜ່ານດ່ານ.

| ລາຍຮັບສະເລ່ຍ/ປີ (ລ້ານກີບ) | 2014 | 2015 | 2017-2018 | 2018-2019 |
|---|---|---|---|---|
| ລາຍຮັບຕໍ່ບ້ານ | 40 | 82.3 | 101 | 66 |
| ລາຍຮັບຕໍ່ຫຼັງຄາເຮືອນ | 1.1 | 1.9 | 2.5 | 1.9 |




**ບົດຮຽນຕ່າງໆຈາກພາກສ່ວນທີ່**

## ກ່ຽວຂ້ອງ ສຳລັບຕ່ອງໂສ້ມູນຄ່າໄມ້ກອັນ

ຫຼາຍປີແລ້ວ ທີ່ກຸ່ມຜູ້ຜະລິດ ແລະ ບ້ານ ໄດ້ມີການຊື້-ຂາຍໄມ້ນານໃຫ້ກັບບໍລິສັດ 3 ປະເພດຄື: ບໍລິສັດທີ່ຊື້-ຂາຍມາດົນ, ບໍລິສັດຢູ່ໃນຊ່ອງຂ້າມຜ່ານ ແລະ ບໍລິສັດເກີດໃໝ່. ຕັ້ງແຕ່ປີ 2019 ຍັງເຫຼືອພຽງ 6 ໃນ 10 ບໍລິສັດທີ່ເຂົ້າຮ່ວມຊື້-ຂາຍໄມ້ນານຈາກປີ 2018 ສະນັ້ນ ການຫຼຸດລົງດັ່ງກ່າວແມ່ນມາຈາກຕະຫຼາດທີ່ຈຳກັດ ແລະ ລາຄາຕ່ຳຈາກລູກຄ້າຫວຽດນາມ ເນື່ອງຈາກຄວາມຕ້ອງການທີ່ຫຼຸດລົງຈາກລູກຄ້າໃນ



ປະເທດອິນເດຍ ແລະ ບັນດາປະເທດໃນອາຊີຕາເວັນອອກສຽງໃຕ້. ນອກຈາກນັ້ນ ແທນທີ່ຈະແປຮູບເປັນໄມ້ຄົ້ວກ່ອນສົ່ງອອກໂດຍອີງໃສ່ລະບຽບການ ແຕ່ກົງກັນຂ້າມບໍລິສັດສ່ວນຫຼາຍໄດ້ສົ່ງອອກໄມ້ມານໂດຍກົງໄປຫວຽດນາມ ເນື່ອງຈາກຂະບວນການປຸງແຕ່ງໃຊ້ຊັບພະຍາກອນຫຼາຍ ແຕ່ໃນຂະນະດຽວກຳໄລທີ່ຄ້າຍຄືກັນ.

**ກຸ່ມຜູ້ຜະລິດໄມ້ປ່ອງ ແລະ ວຽກງານຄຸ້ມຄອງຮັກສາປ່າໄມ້ກວັນ**

ກຸ່ມຜູ້ຜະລິດ ປະກອບດ້ວຍຜູ້ຜະລິດ ຊຶ່ງເຂົ້າຮ່ວມຍ້ອນການຮັບຮູ້ເຖິງຜົນປະໂຫຍດທີ່ຈະໄດ້ຮັບ ໂດຍຄະນະໄມ້ປ່ອງ ແລະ ກຸ່ມຜູ້ຜະລິດແມ່ນໄດ້ຖືກຄັດເລືອກຈາກອຳນາດການປົກຄອງ ແລະ ຊາວບ້ານ ໂດຍມີການຊີ້ນຳໂດຍລວມຈາກທ່ານນາຍບ້ານ ໃນບັນດາຄະນະປະກອບໄປດ້ວຍຫົວໜ້າກຸ່ມ, ຮອງກຸ່ມ, ການບັນຊີ, ການຕະຫຼາດ ແລະ ປ່າໄມ້ບ້ານ ເຊິ່ງກຸ່ມນີ້ມີໜ້າທີ່ຫຼັກໃນການເຈລະນາສັນຍາກັບບໍລິສັດ, ຈັດຕັ້ງການຜະລິດ ແລະ ຊື້-ຂາຍ, ບັນທຶກການຊື້-ຂາຍ, ເກັບຄ່າທຳນຽມຈາກບໍລິສັດ, ບໍລິຫານກອງທຶນຈາກການເກັບຄ່າທຳນຽມ, ປະກາດ ແລະ ບັງຄັບໃຊ້ກົດລະບຽບປ່າໄມ້ທີ່ສ້າງຂຶ້ນ ແລະ ຈັດກິດຈະກຳ ການກວດກາຕິດຕາມປະເມີນປ່າ. ນອກຈາກ ກຸ່ມຜູ້ຜະລິດແລ້ວ ເພື່ອຮັບປະກັນໃຫ້ປ່າໄມ້ຖືກຄຸ້ມຄອງຢ່າງຖືກຕ້ອງ ບ້ານໄດ້ມີລະບົບຄຸ້ມຄອງດ້ວຍການຈັດສັນປ່າໄມ້ປ່ອງ ແລະ ການຕິດຕາມປະເມີນປ່າປະຈຳປີ.






*"ການມີກຸ່ມ ແມ່ນສາມາດເຮັດວຽກໃນຕ່ອງໂສ້ໄມ້ກວັນງ່າຍຂຶ້ນ ແລະ ມີປະສິດທິພາບ-ປະສິດທິຜົນ ໂດຍສະເພາະການປະສານງານໃນການຜະລິດ ແລະ ຊື້-ຂາຍ ລວມທັງເຈລະຈາສັນຍາກັບບໍລິສັດ ແລະ ວຽກງານປ່າໄມ້" (ຄຳເຫັນຈາກສະມາຊິກກຸ່ມ ບ້ານ ເອີນ)*

**ບັນຫາ ແລະ ສິ່ງທ້າທາຍທີ່ພົບພໍ້ ໃນການພັດທະນາຕ່ອງໂສ້ມູນຄ່າໄມ້ກວັນ**

- ຄວາມຫຍຸ້ງຍາກດ້ານໂຄຕ້າ ໂດຍສະເພາະຂັ້ນຕອນການກວດກາແກ່ຍາວເພື່ອຂໍອະນຸມັດສົ່ງອອກໄປປະເທດຫວຽດນາມ ຊຶ່ງສົ່ງຜົນໃຫ້ປະລິມານສົ່ງອອກ ໃນແຕ່ລະປີຫຼຸດລົງ ແລະ ເຮັດໃຫ້ເສຍຜົນກຳໄລ ຊຶ່ງເຮັດໃຫ້ ບາງບໍລິສັດຢຸດການຊື້-ຂາຍໃນຂະນະທີ່ບໍລິສັດອື່ນໆຍັງຄົງສະເໜີໃຫ້ພາກລັດປັບປຸງລະບົບຂົນສົ່ງຜ່ານດ່ານ ລວມທັງຂະບວນການກວດກາໂຄຕ້າ.
- ຕະຫຼາດເກັບຊື້ຫຼຸດລົງ ແລະ ລາຄາຫຼຸດລົງຢູ່ຕະຫຼາດປ້າຍທາງ ແລະ ການບັງຄັບໃຊ້ສັນຍາລະຫວ່າງບໍລິສັດ ແລະ ບ້ານເຮັດໃຫ້ຄວາມເຊື່ອໃຈເຊິ່ງກັນ ແລະ ກັນ ແລະ ແຮງຈູງໃຈຫຼຸດລົງ;
- ບາງກຸ່ມຜູ້ຜະລິດບໍ່ສາມາດບໍລິຫານຄຸ້ມຄອງກອງທຶນຈາກການເກັບຄ່າທຳນຽມໄດ້ດີ ແລະ ປ່າໄມ້ກວັນເຊື່ອມໂຊມ-ເຕີບໂຕຊ້າ ເນື່ອງຈາກເຕັກນິກການເກັບກູ້ ແລະ ການທຳລາຍຈາກຕັກກະແຕນ ມີຜົນເຮັດໃຫ້ປ່ອງນ້ອຍພ້ອມສັ້ນລົງ ຊຶ່ງເຮັດໃຫ້ການສ້າງລາຍຮັບຂອງຊາວບ້ານຫຼຸດລົງເຊັ່ນດຽວກັນ.

**ທ່າແຮງໃນອະນາຄົດ ສຳລັບວຽກງານຕ່ອງໂສ້ມູນຄ່າໄມ້ກວັນ**

- ກຸ່ມຜູ້ຜະລິດສາມາດນຳໃຊ້ປະສົບການ ແລະ ຄວາມສາມາດທີ່ໂຄງການໄມ້ປ່ອງ ແລະ ຫວາຍໄດ້ສະໜັບສະໜູນໃຫ້ ເພື່ອສືບຕໍ່ເຮັດວຽກສ້າງລາຍຮັບຈາກຕ່ອງໂສ້ມູນຄ່າໄມ້ກວັນ ແລະ ໜ້າວຽກອື່ນໆທີ່ສາມາດປະຍຸກໃຊ້ໄດ້;
- ລະບົບການກວດກາ ແລະ ອະນຸມັດໂຄຕ້າຈະໄດ້ຮັບການປັບປຸງ ເພື່ອໃຫ້ສົມດູນກັບຄຳສະເໜີຂອງບັນດາບໍລິສັດ ເພື່ອຊຸກຍູ້ໃຫ້ຕ່ອງໂສ້ມູນຄ່ານີ້ສາມາດສ້າງລາຍຮັບໃຫ້ກັບພາກສ່ວນກ່ຽວຂ້ອງຕ່າງໆ.
- ຄວາມສຳຄັນດ້ານນະໂຍບາຍເພື່ອດຶງດູດນັກທຸລະກິດລາວ ແລະ ບັນດາບໍລິສັດໃຫ້ລົງທຶນຜະລິດຜະລິດຕະພັນສຳເລັດຮູບເຊັ່ນ: ໄມ້ຖູ່, ໄມ້ຈີ້ມແຂ້ວ ແລະ ອື່ນໆ ເພື່ອຕອບສະໜອງການບໍລິໂພກພາຍໃນ ເຊັ່ນດຽວກັນໃຫ້ຫຼຸດຜ່ອນການນຳເຂົ້າຈາກຕ່າງປະເທດ.

## ສະຫຼຸບໂດຍຫຍໍ້ 3:
## ຕ່ອງໂສ້ມູນຄ່າໜໍ່ຂົມສົດ - ພຶດສະພາ 2020

### ສະພາບຄວາມເປັນມາຂອງຕ່ອງໂສ້ມູນຄ່າໜໍ່ຂົມສົດ



ແຂວງຫົວພັນເປັນແຂວງທີ່ມີປ່າໄມ້ປ່ອງທຳມະຊາດປົກຄຸມເປັນສ່ວນໃຫຍ່ ສະນັ້ນ ເພື່ອການສະໜັບສະໜູນແຜນຍຸດທະສາດພັດທະນາໄມ້ປ່ອງຂອງແຂວງ ໄລຍະ I ປີ 2011-2015 ແລະ ໄລຍະ II ປີ 2016-2020 ໂດຍ 1 ໃນຈຳນວນ 5 ຕ່ອງໂສ້ມູນຄ່າທີ່ໄດ້ຮັບການສະໜັບສະໜູນຈາກອົງການເກຣດ (GRET) ແມ່ນມີຕ່ອງໂສ້ມູນຄ່າໜໍ່ຂົມສົດ ເຊິ່ງຈຸດປະສົງເພື່ອສະໜັບສະໜູນການສ້າງລາຍຮັບເພີ່ມໃຫ້ແກ່ປະຊາຊົນທ້ອງຖິ່ນ ໃນຈຳນວນ 19 ບ້ານໃນເມືອງຊຳເໜືອ ແລະ ເມືອງວຽງໄຊ.

ໜໍ່ໄມ້ຂົມແມ່ນຜະລິດຕະພັນທີ່ມີຄວາມສຳຄັນຕໍ່ຊາວບ້ານ ເພາະມັນທັງເປັນແຫຼ່ງອາຫານ ແລະ ເປັນແຫຼ່ງສ້າງລາຍຮັບເສີມ ນັບຕັ້ງແຕ່ປີ 2011 ເປັນຕົ້ນມາ, ໂຄງການໄດ້ສະໜັບສະໜູນ ແລະ ເອົາໃຈໃສ່ໃນການພັດທະນາກຸ່ມຜູ້ຜະລິດ ດ້ານເຄືອຂ່າຍການຄ້າຂາຍ, ທັກສະທາງທຸລະກິດເພື່ອເຊື່ອມໂຍງກັບພາກສ່ວນອື່ນໆ ແລະ ສະພາບແວດລ້ອມ ທີ່ເອື້ອອຳນວຍໃນການຊື້ຂາຍໜໍ່ຂົມ ຄື: ດ້ານນະໂຍບາຍຂອງເມືອງ ແລະ ແຂວງ.



### ສະພາບປັດຈຸບັນຂອງຕ່ອງໂສ້ມູນຄ່າໜໍ່ຂົມສົດ

ແຕ່ປີ 2017 ຈຳນວນ 9 ບ້ານຈາກເມືອງຊຳເໜືອ ແລະ ຈຳນວນ 10 ບ້ານຈາກເມືອງວຽງໄຊ ເຊິ່ງບ້ານເຫຼົ່ານີ້ສ່ວນຫຼາຍແມ່ນຕັ້ງຢູ່ເຂດຊົນນະບົດ ແລະ ມີຫຼາຍຊົນເຜົ່າທີ່ແຕກຕ່າງກັນ ເຊັ່ນ: ເຜົ່າມົ້ງ, ໄທແດງ, ຂະມຸ ແລະ ອື່ນໆ ສະນັ້ນ ຊາວບ້ານໄດ້ເກັບໜໍ່ໄມ້ ໃນຊ່ວງເດືອນທັນວາ ຫາ ເດືອນເມສາ, ໜໍ່ໄມ້ຂົມມີລົດຊາດຕ່າງກັນຄື ລົດຫວານ (ເລີ່ມເດືອນທັນວາ ຫາ ເດືອນມັງກອນ), ລົດຫວານຂົມ (ເດືອນກຸມພາ ຫາ ເດືອນມີນາ) ແລະ ລົດຂົມ (ທ້າຍເດືອນມີນາ ຫາ ເດືອນເມສາ), ເຊັ່ນດຽວກັນ ບັນດາບ້ານໄດ້ຂາຍໜໍ່ຂົມສົດໃຫ້ກັບພໍ່ຄ້າທ້ອງຖິ່ນ, ພາຍໃນ ແລະ ຕ່າງແຂວງ ໂດຍສະເລ່ຍການສ້າງລາຍຮັບເສີມໃຫ້ຊາວບ້ານ ດ້ານລາຄາແມ່ນຂຶ້ນກັບລົດຊາດຂອງໜໍ່ຂົມ ໂດຍເລີ່ມຈາກ 5,000 ກີບ/ກິໂລ ຫາ 1,500 ກີບ/ກິໂລ ແລະ ເວລາຊື້-ຂາຍ ພໍ່ຄ້າໄດ້ຈ່າຍຄ່າທຳນຽມໃຫ້ບ້ານ ເພື່ອເປັນກອງທຶນພັດທະນາໄມ້ປ່ອງຂອງບ້ານ ໂດຍສະເພາະ ຊ່ວຍເຫຼືອຄອບຄົວທີ່ທຸກຍາກພາຍໃນບ້ານ ນຳໃຊ້ເຂົ້າແກ້ໄຂໃນກໍລະນີສຸກເສີນ.



### ປະສົບການຈາກພາກສ່ວນທີ່ກ່ຽວຂ້ອງ ໃນການພັດທະນາຕ່ອງໂສ້ມູນຄ່າໜໍ່ຂົມສົດ

<u>*ສິ່ງທ້າທາຍ ແລະ ຂໍ້ຈຳກັດຂອງກຸ່ມຜູ້ຜະລິດ:*</u>

- *ການຜະລິດ:* ຈຳນວນໜໍ່ຂົມຫຼຸດລົງຍ້ອນບັນຫາສະພາບດິນຟ້າອາກາດ, ບ້ານໃກ້ຄຽງເຂົ້າມາເກັບໜໍ່ໄມ້ຂົມໂດຍບໍ່ໄດ້ຮັບອະນຸຍາດ, ຊາວບ້ານຈຳນວນໜຶ່ງບໍ່ປະຕິບັດຕາມເຕັກນິກການຂຸດຄົ້ນ-ກົດລະບຽບຂອງບ້ານ ແລະ ປ່າໄມ້ໜໍ່ຂົມຈຳນວນໜຶ່ງຖືກທຳລາຍຈາກສັດລ້ຽງ.
- *ການຄ້າຂາຍ:* ມີພໍ່ຄ້າຈຳນວນໜຶ່ງຊື້ໜໍ່ຂົມສົດໃນລາຄາທີ່ຖືກ, ກຸ່ມບໍ່ສາມາດເກັບຄ່າທຳນຽມໄດ້ຈາກພໍ່ຄ້າ ແລະ ຍັງມີຂໍ້ຂັດແຍ່ງລະຫວ່າງພໍ່ຄ້າທ້ອງຖິ່ນ ແລະ ກຸ່ມຜູ້ຜະລິດກ່ຽວກັບລາຄາ ເນື່ອງຈາກພໍ່ຄ້າບໍ່ປະຕິບັດຕາມສັນຍາກັບກຸ່ມຜູ້ຜະລິດ.



- *ການຈັດຕັ້ງ ແລະ ການເຮັດວຽກຂອງກຸ່ມຜູ້ຜະລິດ:* ບາງກຸ່ມຜູ້ຜະລິດຍັງຂາດລະບົບບັນຊີທີ່ຊັດເຈນ, ການລາຍງານຂໍ້ມູນຍັງບໍ່ລະອຽດ ແລະ ຍັງບໍ່ທັນເຂົ້າໃຈດີກ່ຽວກັບພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງສະມາຊິກພາຍໃນກຸ່ມຜູ້ຜະລິດເອງ.

*<u>ດ້ານດີຂອງຊາວບ້ານໃນບ້ານເປົ້າໝາຍໜໍ່ໄມ້ຂົມ:</u>*

- ຊາວບ້ານມີຊີວິດການເປັນຢູ່ທີ່ດີຂຶ້ນ ພ້ອມສາມາດສ້າງລາຍຮັບເສີມຈາກການຂາຍໜໍ່ຂົມສົດ ເພື່ອນໍາໃຊ້ເຂົ້າໃນການໃຊ້ຈ່າຍຊີວິດປະຈໍາວັນ ແລະ ສົ່ງລູກຫຼານໄປໂຮງຮຽນ ໂດຍສະເພາະແມ່ນ ຄອບຄົວທຸກຍາກ.
- ກຸ່ມຜູ້ຜະລິດທີ່ເຂັ້ມແຂງ ແມ່ນສາມາດເກັບຄ່າທໍານຽມຈາກພໍ່ຄ້າ ແລະ ສ້າງເປັນກອງທຶນ ເພື່ອພັດທະນາກິດຈະກໍາໄມ້ປ່ອງພາຍໃນບ້ານ ແລະ ຍັງມີການແລກປ່ຽນປະສົບເຮັດວຽກແບບເພື່ອນສອນເພື່ອນ ກັບກຸ່ມຜູ້ຜະລິດຕ່າງໆ.

*<u>ບົດຮຽນທີ່ຖອດຖອນໄດ້ຈາກພາກສ່ວນທີ່ກ່ຽວຂ້ອງຂອງຕ່ອງໂສ້ມູນຄ່າໜໍ່ຂົມສົດ</u>*



- ການປະສານງານຂອງກຸ່ມຜູ້ຜະລິດ ໄດ້ຊ່ວຍກຸ່ມສາມາດຈັດຕັ້ງການເກັບກູ້ ແລະ ການຂາຍໄດ້ດີ ແຕ່ວ່າ ເຂົາເຈົ້າຍັງຕ້ອງການສະໜັບສະໜູນ ດ້ານການເຊື່ອມໂຍງກັບຕະຫຼາດ ແລະ ການຈົດກ່າຍບັນຊີ.
- ບົດຮຽນແບບເພື່ອນສອນເພື່ອນ ແມ່ນເຮັດໃຫ້ບັນດາບ້ານໜໍ່ຂົມໄດ້ຮັບປະສົບການ ແລະ ບົດຮຽນ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ກຸ່ມຂອງພວກເຂົາເຈົ້າໃນການຊອກຫາວິທີທາງເພື່ອພັດທະນາກຸ່ມ ແລະ ທັກສະໃນການຜະລິດ ພ້ອມທັງການຄຸ້ມຄອງປ່າໄມ້ປ່ອງ ແລະ ການຕິດຕາມກວດກາປ່າໄມ້ແບບຍືນຍົງ ເຊິ່ງ ກິດຈະກໍາແບບເພື່ອນສອນເພື່ອນສາມາດເປັນເຄື່ອງມືທີ່ມີປະສິດທິພາບ ສໍາລັບການພັດທະນາບ້ານໃຫ້ມີຄວາມກ້າວໜ້າ.

**ທ່າແຮງໃນອະນາຄົດ ສໍາລັບວຽກງານຕ່ອງໂສ້ມູນຄ່າໜໍ່ຂົມສົດ**

- ການວິເຄາະ ແລະ ສັງລວມຂໍ້ມູນ ແມ່ນມີຄວາມຈໍາເປັນໃນການມີສ່ວນຮ່ວມ ແລະ ເປັນເຈົ້າການນໍາກັນ ຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອພັດທະນາຕ່ອງໂສ້ມູນຄ່າໜໍ່ຂົມສົດ ໂດຍສະເພາະ ກຸ່ມຜູ້ຜະລິດ, ພາກສ່ວນລັດ ແລະ ພໍ່ຄ້າ.
- ການຂະຫຍາຍກຸ່ມຜູ້ຜະລິດ ໃນບັນດາບ້ານເປົ້າໝາຍໃໝ່ພາຍໃນແຂວງ ຄວນນໍາໃຊ້ວິທີການແບບເພື່ອນສອນເພື່ອນ ເພາະຈະຊ່ວຍໃຫ້ກຸ່ມສາມາດຈັດຕັ້ງປະຕິບັດບໍລິຫານກຸ່ມໄດ້, ຊ່ວຍໃນການກວດກາຕິດຕາມປະເມີນ ແລະ ແຜນການຄຸ້ມຄອງປ່າໄມ້ໄດ້ເປັນຢ່າງດີພ້ອມກັບການສະໜັບສະໜູນຈາກພາກສ່ວນອື່ນໆ (ພາກສ່ວນລັດ ແລະ ພາກເອກະຊົນ).

GRET Professionnels du développement solidaire | ໂຄງການ ໄມ້ປ່ອງ ແລະ ຫວາຍ Bamboo and Rattan Project | AFD | Schweizerische Eidgenossenschaft Confédération suisse Confederazione Svizzera Confederaziun svizra

# ສະຫຼຸບໂດຍຫຍໍ້ 4:
# ຕ່ອງໂສ້ມູນຄ່າດອກແຂມ - ພຶດສະພາ 2020

## ສະພາບຄວາມເປັນມາຂອງການພັດທະນາຕ່ອງໂສ້ມູນຄ່າດອກແຂມ



**ແຂວງຫົວພັນ** ຕັ້ງຢູ່ທາງທິດຕາເວັນອອກສຽງເໜືອຂອງ ສປປ ລາວ ແລະ ພື້ນທີ່ສ່ວນໃຫຍ່ຖືກປົກຄຸມໄປດ້ວຍເຂດພູດອຍທີ່ຊັບຊ້ອນ, ມີອາກາດທີ່ຂ້ອນຂ້າງໜາວເຖິງໜາວຈັດ. ປະກອບດ້ວຍກຸ່ມຊົນເຜົ່າຫຼາຍ 20 ຊົນເຜົ່າໃນທົ່ວ 10 ເມືອງ ເຊິ່ງສ່ວນຫຼາຍເປັນຄອບຄົວທີ່ທຸກຍາກ ທຽບໃສ່ຄ່າສະເລ່ຍຕໍ່ຄົວເຮືອນຂອງປະເທດ. **ສໍາລັບເມືອງຫົວເມືອງ** ເປັນເມືອງໜຶ່ງທີ່ທຸກຍາກໃນແຂວງ ເຊິ່ງການເຂົ້າເຖິງແຫຼ່ງນໍ້າທີ່ສະອາດ, ດ້ານສຸຂະພາບຍັງມີຄວາມຂາດແຄນ ແລະ ບາງຄົນຍັງໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ເຊິ່ງອາຊີບຂອງຊາວບ້ານສ່ວນຫຼາຍແມ່ນການປູກຝັງລ້ຽງສັດ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ໄດ້ຕິດພັນກັບຊີວິດການເປັນຢູ່ຂອງຊາວເມືອງຫົວເມືອງມາແຕ່ດົນນານ ເຊິ່ງສາມາດສ້າງລາຍໄດ້ໃຫ້ແກ່ປະຊາຊົນເປັນຕົ້ນແມ່ນ ຍານ, ເຫັດກໍ່ແດງ, ໜໍ່ຫຼອຍ, ເຫັດຫລິນຈື, ຫວາຍ ແລະ ອື່ນໆ. ໃນນີ້ ດອກແຂມແມ່ນໜຶ່ງໃນເຄື່ອງປ່າຂອງດົງທີ່ສາມາດສ້າງລາຍໄດ້ເສີມໃຫ້ຫຼາຍໆຄອບຄົວ ລວມທັງຄອບຄົວທີ່ມີລາຍຮັບຕໍ່າ ແລະ ຄອບຄົວທີ່ມີຄົນພິການ.

## ສະພາບ ແລະ ພາກສ່ວນຜູ້ກ່ຽວຂ້ອງກັບການພັດທະນາຕ່ອງໂສ້ມູນຄ່າດອກແຂມ



ດອກແຂມເປັນເຄື່ອງປ່າຂອງດົງປະເພດໜຶ່ງ ທີ່ຫາໄດ້ງ່າຍ ພ້ອມມີຈໍານວນຫຼາຍ ແລະ ເປັນທ່າແຮງທີ່ສາມາດສ້າງລາຍຮັບໃຫ້ປະຊາຊົນຫຼາຍພໍສົມຄວນ ໂດຍການເກັບກູ້ມາຈາກປ່າໂດຍກົງ ຫຼື ຕາມແຄມທາງ ໃນຊ່ວງລະດູແລ້ງ (ເດືອນທັນວາ - ກຸມພາ). ນອກນີ້ ດອກແຂມຍັງສາມາດແປຮູບເປັນຍູກວາດເຮືອນ, ສໍາລັບໃບດອກແຂມສາມາດນໍາມາເຮັດເປັນເຂົ້າຫໍ່ເຂົ້າ (ເຂົ້າຕົ້ມພື້ນເມືອງລາວ) ຫຼື ນໍາໄປລ້ຽງສັດ ແລະ ໜໍ່ແຂມອ່ອນສາມາດນໍາມາປຸງແຕ່ງເປັນອາຫານໄດ້. ການສ້າງລາຍຮັບເສີມທີ່ໄດ້ຈາກດອກແຂມ ແມ່ນຊາວບ້ານຈະນໍາໃຊ້ເຂົ້າໃນການໃຊ້ຈ່າຍປະຈໍາວັນເຊັ່ນ: ຄ່າອາຫານ, ເຄື່ອງນຸ່ງ, ຄ່າໄຟຟ້າ ແລະ ການສຶກສາຂອງເດັກນ້ອຍໄດ້.



❖ **ຊາວບ້ານ:** ບັນດາໝູ່ບ້ານໄດ້ມີການຄ້າຂາຍດອກແຂມມາເປັນເວລາຫລາຍປີ ແລະ ເປັນແຫລ່ງລາຍຮັບທີ່ສໍາຄັນ ສໍາລັບຄົວເຮືອນໃນເຂດຊົນນະບົດ, ຊາວບ້ານເກັບກູ້ເພື່ອຂາຍແບບສົດ, ແບບຕາກແຫ້ງກ່ອນຂາຍໃຫ້ກັບພໍ່ຄ້າ. ບາງຄົນແປຮູບເປັນຍູກວາດເພື່ອໃຊ້ໃນເຮືອນ ແລະ ຂາຍໃຫ້ພໍ່ຄ້າ. ເຊິ່ງການຊື້-ຂາຍທີ່ເພີ່ມມູນຄ່າຈາກດອກແຂມ ແມ່ນໄດ້ມາຈາກການຕາກແຫ້ງ ແລະ ການເຮັດເປັນຍູກວາດ.

❖ **ພໍ່ຄ້າ:** ຕ່ອງໂສ້ມູນຄ່າແມ່ນກ່ຽວຂ້ອງກັບພໍ່ຄ້າໃນທ້ອງຖິ່ນ ທີ່ໄດ້ເກັບຊື້, ຂົນສົ່ງ ແລະ ຂາຍຜະລິດຕະພັນໄປຕ່າງແຂວງ. ປັດຈຸບັນມີພໍ່ຄ້າທ້ອງຖິ່ນພາຍໃນບ້ານ 43 ທ່ານ ທີ່ມີສ່ວນຮ່ວມໃນການຊື້ດອກແຂມສົດໃນລາຄາສະເລ່ຍ 1,160 ກີບ/ກິໂລ, ດອກແຂມແຫ້ງໃນລາຄາສະເລ່ຍ 4,500 ກີບ/ກິໂລ ແລະ ຍູກວາດລາຄາສະເລ່ຍ 15,000 ກີບ/ອັນ.

❖ **ພາກສ່ວນລັດ**: ອໍານາດການປົກຄອງຂັ້ນບ້ານ, ເມືອງ ແລະ ແຂວງ ໄດ້ມີສົນທະນາເຖິງຄວາມສໍາຄັນຂອງດອກແຂມສໍາລັບຊາວບ້ານ ໃນການສົນທະນາດັ່ງກ່າວ ພາກສ່ວນລັດເຫັນດີ ແລະ ຊຸກຍູ້ໃຫ້ຊາວບ້ານສຸມໃສ່ການຫັນປ່ຽນຈາກການຂາຍດອກແຂມສົດ ແລະ ແຫ້ງ ມາເປັນການເຮັດຍູກວາດເພື່ອເພີ່ມມູນຄ່າເພີ່ມ ພ້ອມຊຸກຍູ້ໃຫ້ປະຊາຊົນເພີ່ມຄວາມດຸໝັ່ນໃນການສ້າງລາຍຮັບ ເພື່ອໃຫ້ພວກເຂົາເຈົ້າສາມາດຫຼຸດພົ້ນອອກຈາກຄວາມທຸກຍາກຕາມແຜນຍຸດທະສາດການພັດທະນາຂອງແຂວງຫົວພັນ.

❖ **ອົງການເກຣດ (GRET) ແລະ ສະມາຄົມພັດທະນາໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ:** ໃນຖານະຄູ່ຮ່ວມງານໂຄງການເກັບກູ້ລະເບີດແບບຮອບດ້ານ (HI) ແລະ ໃນນາມ *«ຜູ້ອໍານວຍຄວາມສະດວກຂອງການຈັດຕັ້ງປະຕິບັດກິດຈະກໍາ»* ຂອງຂະບວນການຮຽນຮູ້ຮ່ວມກັນ ໂດຍນໍາໃຊ້ວິທີການທີ່ມີສ່ວນຮ່ວມເພື່ອ ຕອບສະໜອງຕາມເປົ້າໝາຍ, ໄດ້ນໍາເອົາປະສົບການທີ່ເຮັດວຽກ 10 ປີ ກ່ຽວກັບການພັດທະນາຊີວິດການເປັນຢູ່ ຂອງຊາວບ້ານຢູ່ເມືອງຊໍາເໜືອ, ເມືອງວຽງໄຊ, ເມືອງສົບເບົາ ໂດຍການປັບໃຊ້ຢູ່ເມືອງຫົວເມືອງ ເຊິ່ງວຽກງານຫຼັກປະກອບມີ ເສີມສ້າງຂີດຄວາມສາມາດໃຫ້ຊາວບ້ານ ໂດຍຜ່ານການພັດທະນາຕ່ອງໂສ້ມູນຄ່າແບບຍືນຍົງ ແລະ ການພັດທະນາກຸ່ມຜູ້ຜະລິດ ເພື່ອສະໜັບສະໜູນການສ້າງລາຍຮັບຈາກ 3 ຕ່ອງໂສ້ມູນຄ່າ (ໝໍ່ຫວາຍ, ເຫັດກໍ່າແດງ ແລະ ດອກແຂມ) ຄຽງຄູ່ກັບການຄຸ້ມຄອງຊັບພະຍາກອນປ່າໄມ້ທໍາມະຊາດແບບຍືນຍົງ.



**ຂອບເຂດກິດຈະກໍາຂອງຕ່ອງໂສ້ມູນຄ່າດອກແຂມ**



ເມືອງຫົວເມືອງມີ 11 ບ້ານ ໃນນັ້ນມີ 900 ຄົວເຮືອນທີ່ເຂົ້າຮ່ວມ ແລະ ຮັບການສະໜັບສະໜູນກ່ຽວກັບຕ່ອງໂສ້ມູນຄ່າດອກແຂມ ແລະ ປີ 2019 ຊາວບ້ານສາມາດສ້າງລາຍຮັບຈາກດອກແຂມໄດ້ 587,760,000 ກີບ, ສະເລ່ຍ 653,067 ກີບ/ຄົວເຮືອນ ເຊິ່ງລາຍຮັບສ່ວນຫຼາຍແມ່ນໄດ້ມາຈາກການຂາຍດອກແຂມສົດ ແລະ ຈໍານວນໜຶ່ງແມ່ນໄດ້ມາຈາກການຂາຍດອກແຂມແຫ້ງ ແລະ ຍູກວາດ. ປັດຈຸບັນມີຈໍານວນຜູ້ພິການ 89 ຄົນມີສ່ວນຮ່ວມໃນກິດຈະກໍາ ເຊິ່ງມັນເປັນທ່າແຮງ ທາງດ້ານເສດຖະກິດທີ່ດີສໍາລັບການມີສ່ວນຮ່ວມຂອງພວກເຂົາເຈົ້າ.



**ການເຊື່ອມໂຍງຂອງຕ່ອງໂສ້ມູນຄ່າດອກແຂມ**

ຫຼາຍພາກສ່ວນທີ່ກ່ຽວຂ້ອງ ແມ່ນໄດ້ສຸມໃສ່ການເພີ່ມມູນຄ່າ ເພື່ອເພີ່ມລາຍຮັບຈາກດອກແຂມ ຄຽງຄູ່ກັບການພັດທະນາການຄຸ້ມຄອງຊັບພະຍາກອນທໍາມະຊາດ ເພື່ອຮັບປະກັນການນໍາໃຊ້ໃນໄລຍະຍາວ. ສະນັ້ນ ການສຶກສາດ້ານການຕະຫລາດໃນໄລຍະມໍ່ໆມານີ້ໄດ້ສະແດງໃຫ້ເຫັນວ່າ ມີທ່າແຮງໃນການເຊື່ອມໂຍງລະຫວ່າງພໍ່ຄ້າຢູ່ນະຄອນຫຼວງວຽງຈັນ, ອຸດົມໄຊ ຫຼື ຊຽງຂວາງກັບຜູ້ຜະລິດ (ດອກແຂມສົດ, ແຫ້ງ ຫລື ຍູກວາດ) ໃນເມືອງຫົວເມືອງ.

**ຂໍ້ຈໍາກັດສໍາລັບກຸ່ມຜູ້ຜະລິດ ແລະ ຊາວບ້ານກໍາລັງປະເຊີນໜ້າກ່ຽວກັບລະບົບຕ່ອງໂສ້ມູນຄ່າ**

- ການເຂົ້າເຖິງແຫຼ່ງຊັບພະຍາກອນປ່າດອກແຂມ ແມ່ນຍັງມີຄວາມຫຍຸ້ງຍາກ ສະເພາະ ຄົນພິການ
- ຍັງມີການຄັດແຍ່ງກັນລະຫວ່າງພໍ່ຄ້າເກັບຊື້ດ້ວຍກັນ ແລະ ການປ່ຽນແປງຂອງດິນຟ້າອາກາດ (ຝົນໜ້ອຍ) ໄດ້ມີຜົນກະທົບຕໍ່ປະລິມານ ແລະ ຄຸນນະພາບຂອງດອກແຂມທໍາມະຊາດ.

**ບົດຮຽນທີ່ຖອດຖອນໄດ້**

- ການຫັນປ່ຽນການດໍາລົງຊີວິດແບບດັ້ງເດີມຈາກການປູກຝັງໄປສູ່ການນໍາໃຊ້ປ່າໄມ້ ແລະ ການຜະລິດແບບຍືນຍົງເພື່ອສ້າງລາຍຮັບເພີ່ມ ແຕ່ຍັງຕ້ອງໄດ້ມີການພັດທະນາເປັນເທື່ອລະກ້າວ ແລະ ການສ້າງຕັ້ງກຸ່ມຜູ້ຜະລິດໃໝ່ຈໍາເປັນຕ້ອງການມີການສ່ວນຮ່ວມຫຼາຍຂຶ້ນຈາກຊາວບ້ານ ແລະ ຜູ້ພິການ ເພື່ອໃຫ້ເຂົາເຈົ້າມີບົດບາດຫຼາຍຂຶ້ນ ໃນກິດຈະກໍາຕ່ອງໂສ້ມູນຄ່າ.
- ມີຄວາມສໍາຄັນຫຼາຍຂອງການເຮັດວຽກຮ່ວມກັບຊາວບ້ານ ເພື່ອຮັບປະກັນຄວາມເຂົ້າໃຈໃນການສະໜັບສະໜູນການປັບປຸງຊີວິດການເປັນຢູ່ ແລະ ການນໍາໃຊ້ປ່າໄມ້ແບບຍືນຍົງ.

UXO Project Houaphanh
A Comprehensive Approach to Mine Action
European Union
ສະຫະພາບ ເອີຣົບ

# ສະຫຼຸບໂດຍຫຍໍ້ 5:
# ຕ່ອງໂສ້ມູນຄ່າເຫັດກໍ່ແດງ - ພຶດສະພາ 2020

## ສະພາບຄວາມເປັນມາຂອງການພັດທະນາຕ່ອງໂສ້ມູນຄ່າເຫັດກໍ່ແດງ



**ແຂວງຫົວພັນ** ມີເນື້ອທີ່ທັງໝົດປະມານ 16,500 km$^2$ ແລະ ຂໍ້ມູນຈາກປີ 2015 ມີປະຊາກອນທັງໝົດປະມານ 289,393 ຄົນ ເຊິ່ງພື້ນທີ່ສ່ວນໃຫຍ່ຖືກປົກຄຸມໄປດ້ວຍເຂດພູດອຍທີ່ຊັບຊ້ອນ, ມີອາກາດທີ່ຂ້ອນຂ້າງໜາວເຖິງໜາວຈັດ. ປະກອບດ້ວຍກຸ່ມຊົນເຜົ່າຫຼາຍ 20 ຊົນເຜົ່າໃນທົ່ວ 10 ເມືອງ ເຊິ່ງສ່ວນຫຼາຍເປັນຄອບຄົວທີ່ທຸກຍາກ ທຽບໃສ່ຄ່າສະເລ່ຍຕໍ່ຄົວເຮືອນຂອງປະເທດ. **ສຳລັບເມືອງຫົວເມືອງ** ເປັນເມືອງໜຶ່ງທີ່ທຸກຍາກໃນແຂວງ ເຊິ່ງອາຊີບຂອງຊາວບ້ານສ່ວນຫຼາຍແມ່ນການປູກຝັງລ້ຽງສັດ, ເຮັດໄຮ່ນາ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ ໄດ້ຕິດພັນກັບຊີວິດການເປັນຢູ່ຂອງຊາວເມືອງຫົວເມືອງມາແຕ່ດົນນານ ເຊິ່ງສາມາດສ້າງລາຍໄດ້ໃຫ້ແກ່ປະຊາຊົນເປັນຕົ້ນແມ່ນ ຍານ, ເຫັດກໍ່ແດງ, ໜໍ່ຫວາຍ, ເຫັດຫລິນຈື, ຫວາຍ ແລະ ອື່ນໆ. ໃນນີ້ ເຫັດກໍ່ແດງແມ່ນສາມາດສ້າງລາຍໄດ້ເສີມໃຫ້ຫຼາຍໆຄອບຄົວເພື່ອປັບປຸງຊີວິດຂອງເຂົາເຈົ້າ.

## ສະພາບ ແລະ ພາກສ່ວນຜູ້ກ່ຽວຂ້ອງກັບການພັດທະນາຕ່ອງໂສ້ມູນຄ່າເຫັດກໍ່ແດງ



ເຫັດກໍ່ແດງແມ່ນໜຶ່ງໃນເຄື່ອງປ່າຂອງດົງ ທີ່ສາມາດສ້າງລາຍຮັບໃຫ້ແກ່ຫຼາຍໆຄົນ ເຊິ່ງຊ່ວງໄລຍະເກັບກູ້ແມ່ນເລີ່ມແຕ່ເດືອນມິຖຸນາ ຫາ ເດືອນສິງຫາ ແລະ ລາຍຮັບທີ່ໄດ້ຈາກການຂາຍເຫັດກໍ່ແດງແມ່ນນຳໃຊ້ເຂົ້າໃນການໃຊ້ຈ່າຍປະຈຳວັນເຊັ່ນ: ຄ່າອາຫານ, ເຄື່ອງນຸ່ງ, ຄ່າໄຟຟ້າ ແລະ ການສຶກສາຂອງເດັກນ້ອຍພາຍໃນຄອບຄົວ.

❖ **ຊາວບ້ານ**: ຊາວບ້ານ ແລະ ພາກສ່ວນກ່ຽວຂ້ອງ ເຫັນວ່າ 4-5 ປີ ຜ່ານມາຍັງບໍ່ໄດ້ມີການຊື້ຂາຍເຫັດກໍ່ແດງ ແຕ່ມັນຖືກນຳໃຊ້ເປັນອາຫານສ່ວນໃຫຍ່ ປັດຈຸບັນ ເຫັດກໍ່ແດງເປັນແຫລ່ງລາຍຮັບທີ່ສຳຄັນສຳລັບຄົວເຮືອນໃນເຂດຊົນນະບົດ ໂດຍຊາວບ້ານໄດ້ເກັບກູ້ມາຂາຍແບບສົດ ຫລື ທຳຄວາມສະອາດ ແລະ ຕາດໃຫ້ແຫ້ງໂດຍນຳໃຊ້ເຕົາອົບ ກ່ອນທີ່ຈະຂາຍໃຫ້ພໍ່ຄ້າ. ບາງຄອບຄົວສາມາດເຮັດເຕົາອົບດ້ວຍຕົນເອງແຕ່ບາງບ້ານກໍ່ບໍ່ມີເຕົາອົບ ແລະ ຈະຕາກແດດໃຫ້ແຫ້ງ.



❖ **ພໍ່ຄ້າ**: ເປັນຜູ້ເກັບຊື້ ພ້ອມຂົນສົ່ງ ແລະ ຂາຍສິນຄ້າໄປຕ່າງແຂວງ ເຊິ່ງຕະຫຼາດປ້າຍທາງແມ່ນຜູ້ບໍລິໂພກຊາວຈີນ ໂດຍລາຄາສະເລ່ຍຂອງເຫັດກໍ່ແດງສົດທີ່ໄດ້ມາດຕະຖານປະມານ **40,000** ກີບ/ກິໂລ ແລະ ເຫັດກໍ່ແດງແຫ້ງດີແມ່ນ **560,000** ກີບ/ກິໂລ.

❖ **ລັດຖະບານ**: ອຳນາດການປົກຄອງຂັ້ນບ້ານ, ເມືອງ ແລະ ແຂວງ ໄດ້ມີສິນທະນາເຖິງຄວາມສຳຄັນຂອງເຫັດກໍ່ແດງ ເຊິ່ງພາກສ່ວນລັດເຫັນດີ ແລະ ຊຸກຍູ້ໃຫ້ຊາວບ້ານສຸມໃສ່ການແປຮູບ, ປຸງແຕ່ງເປັນເຫັດກໍ່ແດງແຫ້ງເພື່ອເພີ່ມມູນຄ່າເພີ່ມ ພ້ອມຊຸກຍູ້ໃຫ້ປະຊາຊົນເພີ່ມຄວາມດຸໝັ່ນໃນການສ້າງລາຍຮັບ ເພື່ອໃຫ້ພວກເຂົາເຈົ້າສາມາດຫຼຸດພົ້ນອອກຈາກຄວາມທຸກຍາກຕາມແຜນຍຸດທະສາດການພັດທະນາຂອງແຂວງຫົວພັນ.

❖ **ອົງການເກຣດ (GRET) ແລະ ສະມາຄົມພັດທະນາໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ:** ໃນຖານະຄູ່ຮ່ວມງານໂຄງການເກັບກູ້ລະເບີດແບບຮອບດ້ານ (HI) ແລະ ໃນນາມ *«ຜູ້ອຳນວຍຄວາມສະດວກຂອງການຈັດຕັ້ງປະຕິບັດກິດຈະກຳ»* ຂອງຂະບວນການຮຽນຮູ້ຮ່ວມ

ກັນ ໂດຍນຳໃຊ້ວິທີການທີ່ມີສ່ວນຮ່ວມເພື່ອ ຕອບສະໜອງຕາມເປົ້າໝາຍ, ໄດ້ນຳເອົາປະສົບການທີ່ເຮັດວຽກ 10 ປີ ກ່ຽວກັບການພັດທະນາຊີວິດການເປັນຢູ່ ຂອງຊາວບ້ານຢູ່ເມືອງຊຳເໜືອ, ເມືອງວຽງໄຊ, ເມືອງສົບເບົາ ໂດຍການປັບໃຊ້ຢູ່ເມືອງຫົວເມືອງ ເຊິ່ງວຽກງານຫຼັກປະກອບມີ ເສີມສ້າງຂີດຄວາມສາມາດໃຫ້ຊາວບ້ານ ໂດຍຜ່ານການພັດທະນາຕ່ອງໂສ້ມູນຄ່າແບບຍືນຍົງ ແລະ ການພັດທະນາກຸ່ມຜູ້ຜະລິດ ເພື່ອສະໜັບສະໜູນການສ້າງລາຍຮັບຈາກ 3 ຕ່ອງໂສ້ມູນຄ່າ (ໜໍ່ຫວາຍ, ເຫັດກໍ່ແດງ ແລະ ດອກແຂມ) ຄຽງຄູ່ກັບການຄຸ້ມຄອງຊັບພະຍາກອນປ່າໄມ້ທຳມະຊາດແບບຍືນຍົງ.

**ຂອບເຂດກິດຈະກຳຂອງການພັດທະນາຕ່ອງໂສ້ມູນຄ່າເຫັດກໍ່ແດງ**



ເມືອງຫົວເມືອງ ມີ 10 ບ້ານ ແລະ 552 ຄົວເຮືອນມີສ່ວນຮ່ວມ ແລະ ໄດ້ຮັບການສະໜັບສະໜູນໃນຕ່ອງໂສ້ມູນຄ່າເຫັດກໍ່ແດງ ບ້ານເຫຼົ່ານີ້ສ້າງລາຍຮັບຈາກການຂາຍເຫັດກໍ່ແດງທັງໝົດ 833,075,000 ກີບໂດຍມີມູນຄ່າສະເລ່ຍ 1,595,929 ກີບຕໍ່ຄົວເຮືອນ. ເຖິງຢ່າງໃດກໍ່ຕາມ ລາຍຮັບຈາກເຫັດກໍ່ແດງສ່ວນຫຼາຍແມ່ນ ໄດ້ມາຈາກການຂາຍເຫັດກໍ່ແດງ ແບບແຫ້ງ. ປັດຈຸບັນ ມີ 32 ຄົນພິການມີສ່ວນຮ່ວມໃນກິດຈະກຳ ເຊິ່ງສະແດງໃຫ້ເຫັນທ່າແຮງ ທາງເສດຖະກິດທີ່ດີສຳລັບການມີສ່ວນຮ່ວມຂອງເຂົາເຈົ້າໂດຍສະເພາະໃນລະຫວ່າງການແປຮູບເຫັດກໍ່ແດງ.

**ການເຊື່ອມໂຍງຂອງຕ່ອງໂສ້ມູນຄ່າເຫັດກໍ່ແດງ**

ຫຼາຍພາກສ່ວນທີ່ກ່ຽວຂ້ອງ (ອົງການເກຣດ GRET, ສະມາຄົມ ສພປດ, ອົງການຈັດຕັ້ງຂອງລັດ ແລະ ພາກເອກະຊົນ) ແມ່ນໄດ້ສຸມໃສ່ການເພີ່ມມູນຄ່າເພື່ອເພີ່ມລາຍຮັບຈາກເຫັດກໍ່ແດງ ຄຽງຄູ່ກັບການການຄຸ້ມຄອງຊັບພະຍາກອນທຳມະຊາດເພື່ອຮັບປະກັນການນຳໃຊ້ໃນໄລຍະຍາວ. ສະນັ້ນ ການສຶກສາດ້ານການຕະຫລາດໃນໄລຍະມໍ່ໆມານີ້ໄດ້ສະແດງໃຫ້ເຫັນວ່າ ມີທ່າແຮງຫຼາຍໃນການເຊື່ອມໂຍງລະຫວ່າງພໍ່ຄ້າຈາກແຂວງອຸດົມໄຊ ແລະ ນະຄອນຫຼວງວຽງຈັນກັບຜູ້ຜະລິດ ໂດຍສະເພາະ ແມ່ນຜູ້ທີ່ມີຖານຜູ້ບໍລິໂພກທີ່ເຂັ້ມແຂງໃນປະເທດຈີນ.

**ຂໍ້ຈຳກັດສຳລັບກຸ່ມຜູ້ຜະລິດ ຫຼື ຊາວບ້ານກຳລັງປະເຊີນໜ້າກ່ຽວກັບລະບົບຕ່ອງໂສ້ມູນຄ່າເຫັດກໍ່ແດງ**

- ເນື່ອງຈາກວ່າເຫັດກໍ່ແດງມີລາຄາສູງ ແລະ ເກັບກູ້ໃນເວລາກາງຄືນເປັນສ່ວນຫຼາຍ ດັ່ງນັ້ນ ມັນມີການແຂ່ງຂັນສູງໃນໝູ່ຊາວບ້ານ ນີ້ຍັງນຳໄປສູ່ການເກັບກ່ຽວທີ່ບໍ່ໄດ້ຮັບອະນຸຍາດຈາກປະຊາຊົນຈາກບ້ານໃກ້ຄຽງ.
- ຊາວບ້ານຍັງຂາດເຕັກນິກການແປຮູບ ແລະ ການຫຸ້ມຫໍ່ທີ່ມີຄຸນນະພາບ ເຮັດໃຫ້ຄຸນນະພາບ ແລະ ລາຄາຫຼຸດລົງ.
- ບໍ່ມີລາຄາທີ່ຍືນຍົງ ແລະ ເປັນຕະຫຼາດທີ່ບໍ່ໝັ້ນຄົງຍ້ອນບໍ່ມີສັນຍາກັບຜູ້ເກັບຊື້ທ້ອງຖິ່ນ ຫຼື ພໍ່ຄ້າຊາວຂາຍ.

**ບົດຮຽນທີ່ຖອດຖອນໄດ້**

- ການຫັນປ່ຽນການດຳລົງຊີວິດແບບດັ້ງເດີມຈາກການປູກຝັງໄປສູ່ການນຳໃຊ້ປ່າໄມ້ ແລະ ການຜະລິດແບບຍືນຍົງເພື່ອສ້າງລາຍຮັບເພີ່ມ ແຕ່ຍັງຕ້ອງໄດ້ມີການພັດທະນາເປັນເທື່ອລະກ້າວ ແລະ ການສ້າງຕັ້ງກຸ່ມຜູ້ຜະລິດໃໝ່ຈຳເປັນຕ້ອງການມີການສ່ວນຮ່ວມຫຼາຍຂຶ້ນຈາກຊາວບ້ານ ແລະ ຜູ້ພິການ ເພື່ອໃຫ້ເຂົາເຈົ້າມີບົດບາດຫຼາຍຂຶ້ນ ໃນກິດຈະກຳຕ່ອງໂສ້ມູນຄ່າ ໂດຍການແປຮູບສິນຄ້າ.
- ມີຄວາມສຳຄັນຫຼາຍຂອງການເຮັດວຽກຮ່ວມກັບຊາວບ້ານ ເພື່ອຮັບປະກັນຄວາມເຂົ້າໃຈໃນການສະໜັບສະໜູນການປັບປຸງຊີວິດການເປັນຢູ່ ແລະ ການນຳໃຊ້ປ່າໄມ້ແບບຍືນຍົງ.

humanity & inclusion
ໂຄງການເກັບກູ້ລະເບີດ ແຂວງ ຫົວພັນ
UXO Project Houaphanh
GRET
OXFAM
A Comprehensive Approach to Mine Action
European Union
ສະຫະພາບ ເອີຣົບ

# ສະຫຼຸບໂດຍຫຍໍ້ 6:
# ການຈັດສັນ-ຄຸ້ມຄອງປ່າໄມ້ປ່ອງທຳມະຊາດ - ພຶດສະພາ 2020

## ສະພາບຄວາມເປັນມາ ສຳລັບວຽກງານຈັດສັນ-ຄຸ້ມຄອງປ່າໄມ້ປ່ອງ




ແຂວງຫົວພັນແມ່ນແຂວງທີ່ມີຄວາມຫຼາກຫຼາຍທາງດ້ານປ່າໄມ້ປ່ອງທຳມະຊາດ ເຊິ່ງເປັນທີ່ຮັບຮູ້ດ້ານທ່າແຮງໄມ້ປ່ອງ ຕັ້ງແຕ່ປີ 2009. ໂຄງການໄມ້ປ່ອງ ແລະ ທວາຍ/ອົງການເກຣດ (GRET) ຮ່ວມກັບພາກສ່ວນລັດຂັ້ນແຂວງ ໄດ້ມີການສະໜັບສະໜູນຜັນຂະຫຍາຍຍຸດທະສາດການພັດທະນາໄມ້ປ່ອງຂອງແຂວງ ຊ່ວງປີ 2012-2015 ໂຄງການໄດ້ຮ່ວມມືກັບ ສູນຄົ້ນຄ້ວາວິທະຍາສາດປ່າໄມ້ແຫ່ງຊາດ FSRC/NAFRI ໃນການສ້າງດອນສາທິດທົດລອງກ່ຽວກັບ 5 ຊະນິດໄມ້ປ່ອງຄື: ໄມ້ຫົກ, ໄມ້ຊາງ, ໄມ້ຂົມ, ໄມ້ກວັນ ແລະ ໄມ້ຈ່າ ເຊິ່ງຜົນໄດ້ຮັບຈາກການທົດລອງນີ້ ແມ່ນຈະໄດ້ປະກອບເຂົ້າໃນແຜນການຄຸ້ມຄອງປ່າໄມ້, ສະໜອງພື້ນຖານເຕັກນິກການຄຸ້ມຄອງແບບຍືນຍົງ ໂດຍຜ່ານຂະບວນການຮຽນຮູ້ຮ່ວມກັນ ເຊິ່ງບັນດາເອກະສານການຈັດສັນ-ຄຸ້ມຄອງປ່າໄມ້ປ່ອງແມ່ນໄດ້ສ້າງບົນພື້ນຖານຮ່ວມກັບ ຄະນະກຳມະການໄມ້ປ່ອງຂັ້ນບ້ານ ແລະ ຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ, ເອກະສານນີ້ລວມມີການກຳນົດຂອບເຂດ, ການສຳຫຼວດ, ຂໍ້ກຳນົດ ແລະ ລະບຽບການໃນການນຳໃຊ້ປ່າໄມ້ປ່ອງແບບຍືນຍົງ.



ເລີ່ມແຕ່ປີ 2012, ຮ່ວມກັບວິຊາການຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ ໄດ້ຈັດຕັ້ງປະຕິບັດວິທີການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ "PLUP" ຢູ່ບາງບ້ານເປົ້າໝາຍທີ່ມີທ່າແຮງທາງດ້ານໄມ້ປ່ອງໃນ 3 ເມືອງຄື: ຊຳເໜືອ, ວຽງໄຊ ແລະ ສົບເບົາ. ເຖິງແມ່ນວ່າວິທີການນີ້ຈະໄດ້ຮັບຜົນດີແຕ່ມັນໃຊ້ເວລາດົນ ແລະ ໃຊ້ງົບປະມານຫຼາຍ ເຊິ່ງເຮັດໃຫ້ຫຼຸດຈຳນວນບ້ານທີ່ຕ້ອງການຈະຈັດຕັ້ງປະຕິບັດລົງ ສະນັ້ນ ຈຶ່ງນຳໄປສູ່ການພັດທະນາວິທີການຮ່ວມ "CM" ໂດຍການລວມເອົາວິທີການ "PLUP" ແລະ ວິທີການຄຸ້ມຄອງປ່າໄມ້ "FM" ມາເປັນວິທີການດຽວທີ່ສັ້ນກ່ວາ ແລະ ສາມາດນຳໃຊ້ໄດ້ຢູ່ຫຼາຍບ້ານໃນໄລຍະເວລາທີ່ສັ້ນ ແລະ ປະຫຍັດງົບປະມານກວ່າ.

## ຂັ້ນຕອນຂອງວິທີການຮ່ວມ "CM" ໃນປະຈຸບັນ ແລະ ບົດຮຽນທີ່ສຳຄັນ

ແຕ່ປີ 2012 ໄດ້ສຳເລັດການວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມ "PLUP" ຢູ່ໃນ 5 ບ້ານ ແລະ ປີ 2013-2020 ສຳເລັດວິທີການຮ່ວມໃນຈັດສັນປ່າໄມ້ປ່ອງໃນ 24 ບ້ານ ຢູ່ພາຍໃນ 3 ເມືອງຂ້າງເທິງ, ເຊິ່ງວິທີການຮ່ວມ "CM" ນີ້ປະກອບມີ 11 ຂັ້ນຕອນຄື:



*ຂັ້ນຕອນ 1) ການສ້າງແຜນທີ່ 3 ມິຕິ.*

*ຂັ້ນຕອນ 2) ເປີດພິທີການຈັດສັນປ່າ.*

*ຂັ້ນຕອນ 3) ການກຳນົດຂອບເຂດຄຸ້ມຄອງທີ່ດິນບ້ານ.*

*ຂັ້ນຕອນ 4) ຄັດເລືອກຊະນິດໄມ້ປ່ອງທີ່ຕ້ອງການຈັດສັນພາຍໃນບ້ານ.*

*ຂັ້ນຕອນ 5) ປະເມີນຂີດຄວາມສາມາດໃນການຜະລິດຂອງບ້ານ.*

*ຂັ້ນຕອນ 6) ກຳນົດຂອບເຂດປ່າໄມ້ປ່ອງທີ່ຕ້ອງການຈັດສັນ ແລະ ພື້ນທີ່ປູກໄມ້ປ່ອງ.*

*ຂັ້ນຕອນ 7) ການແບ່ງເຂດ ແລະ ຄິດໄລ່ດອນຕົວຢ່າງ.*

*ຂັ້ນຕອນ 8) ລົງສຳຫຼວດຕົວຈິງ.*

*ຂັ້ນຕອນ 9) ສ້າງລະບຽບການຄຸ້ມຄອງປ່າໄມ້ (ຮ່ວມກັບບ້ານ).*

*ຂັ້ນຕອນ 10) ສ້າງແຜນຄຸ້ມຄອງ ແລະ ແຜ່ນທີ່ກະດານ, ແລະ*

*ຂັ້ນຕອນ 11) ປິດພິທີການຈັດສັນປ່າ.*



ຜ່ານການຈັດຕັ້ງປະຕິບັດແຕ່ປີ 2013 ເຊິ່ງພາກສ່ວນທີ່ກ່ຽວຂ້ອງ ເຫັນໄດ້ວ່າ "ວິທີການຮ່ວມ CM" ແມ່ນມີປະໂຫຍກຫຼາຍສຳລັບ ການຈັດສັນປ່າໄມ້ປ່ອງເພື່ອການນຳໃຊ້ແບບຍືນຍົງ ໃນຂັ້ນບ້ານ ໂດຍຜ່ານການມີສ່ວນຮ່ວມຂອງ ຄະນະກຳມະການໄມ້ປ່ອງຂັ້ນບ້ານ ທີ່ສາມາດຈັດຕັ້ງ, ນຳໃຊ້ຂໍ້ກຳນົດ ແລະ ລະບຽບການຂອງບ້ານ ເພື່ອ ຮັບປະກັນການຄຸ້ມຄອງ ແລະ ການຕິດຕາມຊັບພະຍາກອນໄມ້ປ່ອງ ຂອງບ້ານເຂົາເຈົ້າຢ່າງຍືນຍົງ, ບ້ານມີເຕັກນິກໃນການເກັບກູ້ ແລະ ການປະເມີນຂີດຄວາມສາມາດຂອງບ້ານ ແລະ ຂີດຄວາມສາມາດ ຂອງປ່າ ເພື່ອປ້ອງກັນການເກັບກູ້ເກີນຄວາມສາມາດຂອງປ່າ. ໂດຍ ການນຳໃຊ້ວິທີການຮ່ວມ ຊາວບ້ານສາມາດເຫັນຜົນປະໂຫຍດຂອງ ການຈັດສັນປ່າໃນໄລຍະຍາວ ເພາະເຂົາເຈົ້າມີສິດໃນການຄຸ້ມຄອງ, ກຳນົດລະບຽບ ແລະ ຕິດຕາມກວດກາປ່າຂອງເຂົາ ພ້ອມກັບການ ປະເມີນສະພາບປ່າ ແລະ ຂີດຄວາມສາມາດໃນການຜະລິດ ເພື່ອສົມດູນຄວາມຕ້ອງການຂອງພໍ່ຄ້າ ແລະ ບໍລິສັດ (ສຳລັບໜໍ່ ແລະ ລຳ).

**ທ່າແຮງໃນອະນາຄົດຂອງວຽກງານຈັດສັນ-ຄຸ້ມຄອງປ່າໄມ້ປ່ອງ**

ຈາກປະສົບການຈັດຕັ້ງປະຕິບັດໃນ 3 ເມືອງຂອງໂຄງການ ວິທີການນີ້ຍັງມີທ່າແຮງທີ່ຈະຂະຫຍາຍໄປໃນເມືອງອື່ນໆພາຍໃນແຂວງ ແລະ ຕ່າງແຂວງສຳລັບບ້ານທີ່ມີທ່າແຮງດ້ານໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ, ເຊິ່ງວຽກງານນີ້ຈະຈັດຕັ້ງປະຕິບັດດ້ວຍ ສະມາຄົມ ພັດທະນາໄມ້ປ່ອງ ແລະ ເຄື່ອງປ່າຂອງດົງ ທີ່ມີປະສົບການກ່ຽວກັບການຈັດສັນ-ຄຸ້ມຄອງ ແລະ ການຕິດຕາມກວດກາ ຊັບພະຍາກອນທຳມະຊາດ. ນອກຈາກນີ້ ສະມາຄົມຍັງສາມາດຮ່ວມມືກັບອົງການຈັດຕັ້ງຕ່າງໆເຊັ່ນ: ອົງການຈັດຕັ້ງສາກົນທີ່ບໍ່ສັງກັດ ລັດ ແລະ ອົງການຈັດຕັ້ງທາງສັງຄົມລາວ ເພື່ອພັດທະນາລວມເອົາວິທີການຮ່ວມເຂົ້າໃນເຄື່ອງມື ການຄຸ້ມຄອງຊັບພະຍາກອນຕ່າງໆ ເພື່ອໃຫ້ເໝາະສົມກັບຄວາມຕ້ອງການ ພ້ອມຮ່ວມມືກັບຫ້ອງການທີ່ກ່ຽວຂ້ອງຂອງລັດເພື່ອເປັນເອກະພາບວິທີການໃຫ້ສາມາດເຊື່ອມ ໂຍງ ແລະ ການຈັດຕັ້ງປະຕິບັດໃຫ້ເໝາະສົມຕາມຄວາມວິທີການຂອງພາກສ່ວນລັດ.

**ຂໍ້ຈຳກັດ ແລະ ຄຳແນະນຳ ສຳລັບວຽກງານຈັດສັນ-ຄຸ້ມຄອງປ່າໄມ້ປ່ອງ**

➢ ***ຂໍ້ຈຳກັດ***

ໜຶ່ງສາເຫດຫຼັກທີ່ເຮັດໃຫ້ຊັບພະຍາກອນໄມ້ປ່ອງໃນຫຼາຍບ້ານມີການຫຼຸດລົງແມ່ນຝູງຕັກກະແຕນທີ່ມີການເພີ່ມຂຶ້ນ ເປັນເຫດສິ່ງຜົນ



ກະທົບໃຫ້ກັບພື້ນທີ່ປ່າໄມ້ປ່ອງ ຖືກທຳລາຍໂດຍການກັດກິນໃບໄມ້ປ່ອງ, ການອອກໜໍ່ຕ່ຳ ແລະ ລຳທີ່ເກີດມີໜ້ອຍ ນອກຈາກນີ້ ຍັງຂາດການ ລົງທຶນຂອງບໍລິສັດຕ່າງໆໃນການດຳເນີນໂຮງງານຜະລິດແບບສຳເລັດຮູບ ຕາມເງື່ອນໄຂຂອງລັດທີ່ໄດ້ກຳນົດໄວ້ ຈຶ່ງເຮັດໃຫ້ບໍ່ມີການຄຸ້ມຄອງປ່າ ແບບຍືນຍົງ ແລະ ຫຼຸດການສ້າງລາຍຮັບແບບຍືນຍົງ. ເຊິ່ງວິທີການຮ່ວມ "CM" ທີ່ນຳໃຊ້ໃນການຈັດສັນປ່າໄມ້ປ່ອງໃນຂັ້ນບ້ານນັ້ນ ແມ່ນຮັບຮູ້ ແລະ ຮັບຮອງໂດຍພາກສ່ວນລັດ (ສະເພາະຫ້ອງການກ່ຽວຂ້ອງຂອງ ເມືອງ) ແຕ່ວ່າຂໍ້ມູນຈາກການຈັດສັນ ແລະ ການຕິດຕາມກວດກາປ່າຂອງ ຄະນະກຳມະການໄມ້ປ່ອງຂັ້ນບ້ານ ບໍ່ໄດ້ເຊື່ອມໂຍງເຂົ້າໃນລະບົບຂອງ ພາກສ່ວນລັດ, ສະນັ້ນ ມັນມີຄວາມສຳຄັນທີ່ຈະທັບຂໍ້ຈຳກັດເຫຼົ່ານີ້ ເພື່ອກະຕຸ້ນການລົງທຶນ, ການເຕີບໃຫຍ່, ຄວາມເປັນເຈົ້າການຂອງ ຊາວບ້ານ ແລະ ຄະນະກຳມະການໄມ້ປ່ອງຂັ້ນບ້ານໃນທາງທີ່ສ້າງສັນ.

➢ ***ຄຳແນະນຳ***

ເພື່ອຮັບປະກັນການນຳໃຊ້ຊັບພະຍາກອນໄມ້ແບບຍືນຍົງ ແລະ ການສ້າງລາຍຮັບໃນໄລຍະຍາວໃຫ້ກັບຊາວບ້ານ ເຊິ່ງຊາວບ້ານຄວນມີ ຄວາມຕື່ນຕົວສູງໃນການຄຸ້ມຄອງຊັບພະຍາກອນ ແລະ ຕ້ອງໄດ້ໃຊ້ຂໍ້ມູນຂອງການຈັດສັນປ່າເພື່ອເປັນບ່ອນອີງໃນການຄຸ້ມຄອງ ແລະ ເກັບກູ້ແບບຍືນຍົງ.

**ຂໍ້ມູນເພີມສຳລັບ ສພປຄ:**

**ເຟສບຸກເພກ:** ສະມາຄົມພັດທະນາໄມ້ປ່ອງ&ເຄື່ອງປ່າຂອງດົງ/Bamboo & NTFP Development Association

**ອີເມວ:** bnda2018@gmial.com

**ໂທ:** 064 312 070